ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະລາດ ວັດທະນາຖາວອນ

------===000===-------

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ
628 ບ້ານ: ໂພນພະເນົາ ກມ5
ຖະໜົນ: ໄກສອນພົມວິຫານ ເມືອງ: ໄຊເສດຖາ
ນະຄອນຫຼວງວຽງຈັນ ໂທ-ແຟັກ:(+856 21)418062 – 6

ເລກທີ: 1903019/ມທທຊ

ນະຄອນຫຼວງວຽງຈັນ, ວັນທີ: 22/03/2019

ຮຽນ : ທ່ານ ຫົວໜ້າ ສຳນັກງານຄະນະກຳມະການ ຄຸ້ມຄອງຫຼັກຊັບ
ທ່ານ ຜູ້ອຳນວຍການໃຫ່ຍ ຕະຫຼາດຫຼັກຊັບລາວ
ບັນດາຜູ້ຖືຮຸ້ນ ຂອງບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ເລື່ອງ: ແຈ້ງມະຕິທີ່ສຳຄັນຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 2/2019, ທີ່ຈະຈັດຂຶ້ນໃນວັນທີ 22 ມີນາ 2019

- ອີງຕາມລະບຽບວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 04/ຄຄຊ, ລົງວັນທີ 28 ມັງກອນ 2019
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 330/ຕລຊລ, ລົງວັນທີ 27 ກັນຍາ 2018

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ (ບໍລິສັດ "ມທທຊ") ຂໍຖືເປັນກຽດແຈ້ງມະຕິທີ່ສຳຄັນຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 2/2019 ທີ່ຈະຈັດຂຶ້ນ ໃນວັນທີ 22 ມີນາ 2019, ເຊິ່ງມີວາລະຮັບຮອງເອົາບັນຫາທີ່ສຳຄັນ ດັ່ງລາຍລະອຽດດັ່ງນີ້:

1. ຮັບຮອງຜົນການກວດສອບເອກະສານລາຍງານການເງິນປະຈຳປີ 2018 ຈາກບໍລິສັດຜູ້ກວດສອບພາຍນອກ ເພື່ອນຳສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນໃຫ້ພິຈາລະນາ ແລະ ຮັບຮອງ.
2. ອະນຸມັດການຈ່າຍເງິນປັນຜົນ ຈາກຜົນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2018 ພາຍຫຼັງການຫັກເປັນຄັງສຳຮອງຕາມລະບຽບການ ແລະ ຈາກເງິນສະສົມໄວ້ໃນຊຸມປີຜ່ານມາ ໃຫ້ແກ່ຜູ້ຖືຮຸ້ນທີ່ມີລາຍຊື່ຢູ່ໃນປຶ້ມບັນຊີຜູ້ຖືຮຸ້ນ ໃນວັນທີປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການໄດ້ຮັບເງິນປັນຜົນ ໃນອັດຕາ 147 ກີບຕໍ່ຮຸ້ນ, ລວມເປັນເງິນປັນຜົນທີ່ຈະຈ່າຍທັງໝົດ 5,880,000,000 ກີບ ແລະ ກຳນົດວັນຈ່າຍເງິນປັນຜົນໃຫ້ຜູ້ຖືຮຸ້ນ ພາຍໃນ 30 ວັນ ຫຼັງຈາກກອງປະຊຸມຜູ້ຖືຮຸ້ນອະນຸມັດ ໂດຍການອະນຸມັດຈ່າຍເງິນປັນຜົນຕ້ອງສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີເພື່ອອະນຸມັດ.

3. ພິຈາລະນາການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ກຳນົດຄ່າຕອບແທນສຳລັບການກວດສອບບັນຊີ ປະຈຳປີ 2019 ເພື່ອນຳສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງ.
4. ພິຈາລະນາ ການກຳນົດຜົນຕອບແທນປະຈຳປີ, ເບ້ຍປະຊຸມ ແລະ ເງິນເດືອນຂອງຜູ້ອຳນວຍການ ເພື່ອນຳສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງ.
5. ພິຈາລະນາ ແລະ ນຳສະເໜີແນວທາງການຈັດຫາແຫຼ່ງເງິນກູ້ ເພື່ອໃຊ້ສຳລັບການຂະຫຍາຍທຸລະກິດຕາມແຜນການດຳເນີນທຸລະກິດປະຈຳປີ 2019.
6. ກຳນົດວັນທີ 04 ເມສາ 2019 ແມ່ນ ມື້ປິດປຶ້ມບັນຊີທະບຽນຜູ້ຖືຄອງຮຸ້ນຂອງບໍລິສັດ ເພື່ອກຳນົດຜູ້ມີສິດເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ແລະ ໄດ້ຮັບເງິນປັນຜົນ ປະຈຳປີ 2018
7. ກຳນົດເອົາວັນທີ 26 ເມສາ 2019 ເປັນມື້ຈັດກອງປະຊຸມຜູ້ຖືຮຸ້ນສາມັນປະຈຳປີ 2018 ແລະ ອະນຸມັດ ວາລະກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2018 ໂດຍມອບໃຫ້ຜູ້ອຳນວຍການໃຫ່ຍເປັນຜູ້ກະກຽມກອງປະຊຸມດັ່ງກ່າວ

ດັ່ງນັ້ນ, ຈຶ່ງຮຽນມາຍັງທ່ານເພື່ອຊາບ ແລະ ໃຊ້ຕາງລາຍງານ

ດ້ວຍຄວາມນັບຖືຢ່າງສູງ

ສະມາຊິກສະພາບໍລິຫານ/ຜູ້ອຳນວຍການໃຫ່ຍ

(ທ່ານ ມານີ ຕຣີສີດວິໄລ)